ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຜູ້ວ່າການ ທຫລ ເນັ້ນແກ້ບາງວຽກຂອງແຜນເງິນຕາ



ທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ລາຍງານຜົນການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2021 ຕໍ່ກອງປະຊຸມເຊື່ອມຊຶມ ມະຕິ XI ຂອງພັກ ໃນວັນທີ 14.07.2021 ວ່າ: ທຫລ ສືບຕໍ່ປະຕິບັດນະໂຍບາຍເງິນຕາ ໂດຍການປັບຫຼຸດອັດຕາເງິນແຮຝາກບັງຄັບ, ສືບຕໍ່ປະຕິບັດກົນໄກການປະມູນພັນທະບັດຄັງເງິນ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນເປັນເຄື່ອງມືຕົ້ນຕໍເພື່ອສ້າງຄວາມເຂັ້ມແຂງໃຫ້ສະຖຽນລະພາບເງິນຕາແຫ່ງຊາດໄລຍະສັ້ນ ແລະ ຄົ້ນຄວ້ານຳສະເໜີມາດຕະການຮັກສາສະຖຽນລະພາບເງິນຕາແຫ່ງຊາດໄລຍະກາງ-ໄລຍະຍາວ; ເພີ່ມທະວີການຄຸ້ມຄອງເງິນຕາຕ່າງປະ ເທດ ແລະ ຮ້ານແລກປ່ຽນ  ໂດຍປະຕິບັດມາດຕະການຕໍ່ຫົວໜ່ວຍ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການ. ມາຮອດທ້າຍເດືອນ 6/2021, ໄດ້ອອກແຈ້ງການໂຈະການຮັບເອກະສານຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດ ເພື່ອທົບທວນ, ປະເມີນຜົນກົນໄກການຄຸ້ມຄອງໃນໄລຍະຜ່ານມາເພື່ອປັບປຸງ ເຮັດໃຫ້ຮັດກຸມ ແລະ ມີຈຸດສູມກວ່າເກົ່າ, ພ້ອມທັງອອກຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຮ້ານແລກປ່ຽນ ຜ່ານທະນາຄານທຸລະກິດ ແລະວຽກອື່ນ ທີ່ຕິດພັນ.

ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳຈຳນວນໜຶ່ງ ຕິດພັນກັບການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ຕິດຕາມກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຢ່າງປົກກະຕິຕາມ

ລະບຽບຄວາມໝັ້ນຄົງ, ປະຕິບັດໂຄງການສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 ແລະ ອອກຂໍ້ຕົກລົງເພີ່ມຕື່ມ ວ່າດ້ວຍການປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ; ສຳເລັດການຄົ້ນຄວ້າການນຳໃຊ້ເງິນຍອນມາເພີ່ມເປັນທຶນຈົດທະບຽນຂອງທະນາຄານທຸລະກິດ; ສືບຕໍ່ປັບປຸງໂຄງສ້າງ 2 ທະນາຄານລັດ ເພື່ອຫັນເປັນທະນາຄານຮ່ວມທຶນ ຕາມທິດຊີ້ນຳຂອງລັດຖະບານ; ອະນຸຍາດດຳເນີນທຸລະກິດໃຫ້ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ 8 ແຫ່ງ.

ສືບຕໍ່ປະຕິບັດນະໂຍບາຍ ເພື່ອສ້າງຄວາມເຂັ້ມແຂງດ້ານແຫຼ່ງທຶນໃຫ້ແກ່ຈຸນລະວິສະຫະກິດ, ວິສະຫະກິດຂະໜາດນ້ອຍ, ກາງ (SMEs) ຜ່ານກອງທຶນສົ່ງເສີມ (SMEs) ຂອງລັດຖະບານ ພາຍໃຕ້ໂຄງການສົ່ງເສີມ SME ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໂດຍປ່ອຍຜ່ານ 4 ທະນາຄານ, ຊຶ່ງຮອດທ້າຍເດືອນ 06/2021 ໄດ້ປ່ອຍກູ້ໃຫ້ທະນາຄານທຸລະກິດ 187 ຕື້ກີບ ເພື່ອປ່ອຍກູ້ຕໍ່ໃຫ້ລູກຄ້າເປົ້າໝາຍ. ສຳລັບທະນາຄານນະໂຍບາຍສືບຕໍ່ສະໜອງແຫຼ່ງທຶນທັງໝົດ 64 ກວ່າຕື້ກີບ; ສຳເລັດການເປີດກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນ ສປປ ລາວ (LAFF); ຊຸກຍູ້ການເບີກຖອນເງິນກູ້ຈຳນວນ 100 ລ້ານໂດລາ ຈາກ CDB ເພື່ອປະຕິບັດໂຄງການສິນເຊື່ອ ເພື່ອສົ່ງເສີມ SME.

ສຳເລັດການສ້າງ-ປັບປຸງນິຕິກຳຂັ້ນລັດຖະບານ ເປັນຕົ້ນດຳລັດ ວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ, ດຳລັດວ່າດ້ວຍການເງິນ ແລະ ການບັນຊີ, ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຄຊ (ສະບັບປັບປຸງ) ແລະ ອອກນິຕິກຳຂັ້ນ ທຫລ ຈຳນວນໜຶ່ງ. ປະຕິບັດວຽກງານຊຳລະຫັນສູ່ທັນສະໄໝ ໂດຍໄດ້ອະນຸຍາດເປີດບໍລິການທາງເອເລັກໂຕຼນິກ ເປັນຕົ້ນ: Cool Wallet, U-Money ແລະM-Money; ຄົ້ນຄວ້າມາດຕະຖານຂໍ້ຄວາມລະບົບການຊຳລະທຸລະກຳຍ່ອຍ, ຄົ້ນຄວ້າລະບຽບການນຳໃຊ້ລະບົບຮ່ວມ ກັນ (Business Rules) ແລະຄົ້ນຄວ້າກ່ຽວກັບ Lao QR Code Specification; ສຳເລັດການອອກໃບອະນຸຍາດໃຫ້ບໍລິການຜະລິດຕະພັນດ້ານການຊຳລະຈຳນວນ 5 ກໍລະນີ; ອະນຸຍາດໃຫ້ ທຄຕລ ໃຫ້ບໍລິການຮັບຊຳລະຄ່າສິນຄ້າ, ບໍລິການລະຫວ່າງປະເທດ ແລະ ປັບປຸງການໃຫ້ບໍລິການຜະລິດຕະພັນບັດ BCEL Union Pay ຈາກບັດແຖບແມ່ເຫຼັກມາເປັນບັດຊິບ.

ຄົ້ນຄວ້າການອອກຈຳໜ່າຍຫຼັກຊັບ ຮອດທ້າຍເດືອນ 06/2011 ມີຍອດເຫຼືອລະດົມທຶນ ຜ່ານຕະຫຼາດທຶນກວມ 14,21% ຂອງ GDP; ຄຸ້ມຄອງການຊື້-ຂາຍໃນຕະຫຼາດຂັ້ນສອງ ໄປຄຽງຄູ່ກັບການຄຸ້ມຄອງສະຖາບັນສື່ກາງທາງດ້ານຫຼັກຊັບໃຫ້ເຄື່ອນໄຫວສອດຄ່ອງຕາມລະບຽບການ; ສຳເລັດແຜນວຽກ ເພື່ອກະກຽມການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດ IFRS, ສຳເລັດການສ້າງບົດປະເມີນການບໍລິຫານກິດຈະການ ແລະ ກົນໄກການປະເມີນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ. ກະກຽມຮ່າງຄຳຕອບ ທີ່ຕິດພັນກັບຄຳຖາມເຈາະຈີ້ມກ່ອນການປະເມີນຕົວຈິງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງ.

ຕະຫຼອດ 6 ເດືອນຜ່ານມາ ໂດຍລວມສາມາດສືບຕໍ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດໄດ້ໂດຍພື້ນຖານ, ສະແດງອອກອັດຕາເງິນເຟີ້ ສະເລ່ຍຢູ່ໃນລະດັບ 2,83% , ເງິນກີບອ່ອນຄ່າ ສະເລ່ຍ 4,1% ທຽບໂດລາ, ປະລິມານເງິນ M2 ເພີ່ມຂຶ້ນ 14,32%; ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ 3,76 ເດືອນ, ຍອດເຫຼືອເງິນຝາກເພີ່ມຂຶ້ນ 27,45% ກວມເອົາ 66,48%ຂອງ GDP ແລະ ຍອດສິນເຊື່ອຂອງທະນາຄານທຸລະກິດ ເພີ່ມຂຶ້ນ 4,81% ກວມເອົາ 47,02% ຂອງ GDP ທຽບໃສ່ປີຜ່ານມາຖືວ່າບັນລຸເປັນສ່ວນໃຫຍ່, ໃນຂະນະທີ່ອັດຕາສ່ວນໜີ້ເສຍສະເລ່ຍຢູ່ໃນລະດັບ 2,95% ຂອງຍອດສິນເຊື່ອທັງໝົດ; ລະບົບການເງິນມີທ່າຂະຫຍາຍຕົວຄື: ທະນາຄານທຸລະກິດມີ 44 ແຫ່ງ, ມີສາຂາ 114 ແຫ່ງ, ໜ່ວຍບໍລິການ 540 ແຫ່ງ, ຕູ້ ATM 1.347 ໜ່ວຍ, ສະຖາບັນການເງິນ ປະເພດຕ່າງໆ

ມີ 198 ແຫ່ງ; ລະບົບນິຕິກຳໃນການຄຸ້ມຄອງມະຫາພາກດ້ານຕ່າງໆຮັບການສ້າງ ແລະ ປັບປຸງໃຫ້ສອດຄ່ອງກັບມາດຕະຖານແລະສະພາບຕົວຈິງ, ລະບົບການຊຳລະຮັບການພັດທະນາໃຫ້ມີຫຼາກຫຼາຍຜະລິດຕະພັນ ແລະ ທັນສະໄໝຂຶ້ນ; ຕະຫຼາດທຶນຮັບການພັດທະນາຢ່າງເປັນລະບົບ ແລະ ຖືກຮັບຮູ້ຈາກສັງຄົມຫຼາຍຂຶ້ນ ແລະ ນອກນີ້ ຍັງມີຫຼາຍດ້ານພົ້ນເດັ່ນຂຶ້ນ.

ຄຽງຄູ່ກັບຜົນສຳເລັດນັ້ນ, ກໍ່ຍັງມີຂໍ້ຄົງຄ້າງທີ່ຮັບການແກ້ໄຂຢ່າງຕັ້ງໜ້າ ເປັນຕົ້ນ ສ່ວນຕ່າງອັດຕາແລກປ່ຽນສະກຸນເງິນກີບ ທຽບໃສ່ເງິນໂດລາ ລະຫວ່າງທະນາຄານທຸລະກິດກັບຕະຫຼາດນອກລະບົບ ຍັງຢູ່ໃນລະດັບທີ່ສູງສົມຄວນ; ການຊຸກຍູ້ບໍລິສັດເປົ້າໝາຍ ອອກຈຳໜ່າຍຫຼັກຊັບລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການຊື້-ຂາຍ ເພື່ອດຶງດູດຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ບັນລຸແຜນການ ແລະ ກໍ່ຍັງມີບາງດ້ານ ທີ່ຈະຕ້ອງຮັບການປັບປຸງ ແລະ ແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້ານີ້.

**# ໂດຍ: ຣັດສະໝີ ດວງສັດຈະ**

*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ*